ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ກົມສ່ວຍສາອາກອນ

3672
ເລກທີ............../ກສອ
ນະຄອນຫລວງວຽງຈັນ, ວັນທີ 12 OCT 2021

**ຄໍາແນະນໍາ ການປະຕິບັດພັນທະອາກອນ**
**(ສໍາລັບ ຈຸນລະວິສາຫະກິດ)**

- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ, ລົງວັນທີ 17 ມິຖຸນາ 2019;
- ອີງຕາມ ກົດໝາຍວ່າດ້ວຍອາກອນລາຍໄດ້ ສະບັບເລກທີ 67/ສພຊ, ລົງວັນທີ 18 ມິຖຸນາ 2019.

ກົມສ່ວຍສາອາກອນ ແນະນໍາການຈັດຕັ້ງປະຕິບັດພັນທະອາກອນ ໃຫ້ແກ່ຈຸນລະວິສາຫະກິດ ທີ່ເລີ່ມຕົ້ນທຸລະກິດໃໝ່ ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດພັນທະອາກອນ ຖືກຕ້ອງ, ສອດຄ່ອງ ຕາມກົດໝາຍກໍານົດ ຫຼືກລ່ຽງການຖືກປັບໃໝ ທີ່ຈະເກີດຂຶ້ນ ແນໃສ່ຊຸກຍູ້ສົ່ງເສີມໃຫ້ຈຸນລະວິສາຫະກິດ ມີການເຄື່ອນໄຫວທຸລະກິດຢ່າງຊອບທໍາ, ຊຶ່ງມີລາຍລະອຽດດັ່ງນີ້:

1. ຈຸນລະວິສາຫະກິດ ທີ່ເຄື່ອນໄຫວທຸລະກິດ ມີລາຍຮັບປະຈໍາປີ ແຕ່ 50,000,000 ກີບ ລົງມາ ແມ່ນໄດ້ຮັບການຍົກເວັ້ນການເສຍອາກອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂໍ້ 1 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້;

2. ຈຸນລະວິສາຫະກິດ ທີ່ເຄື່ອນໄຫວທຸລະກິດ ມີລາຍຮັບປະຈໍາປີ ແຕ່ 50,000,001 – 400,000,000 ກີບ ແມ່ນຖືກເສຍອາກອນລາຍໄດ້ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 29 ຂໍ້ 2 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້ ຕາມອັດຕາອາກອນດັ່ງນີ້:

- ອັດຕາ ໜຶ່ງ ສ່ວນຮ້ອຍ (1%) ສໍາລັບການຜະລິດ ກະສິກໍາ, ອຸດສາຫະກໍາ ແລະ ການຜະລິດອື່ນ;
- ອັດຕາ ສອງ ສ່ວນຮ້ອຍ (2%) ສໍາລັບການຄ້າ;
- ອັດຕາ ສາມ ສ່ວນຮ້ອຍ (3%) ສໍາລັບການບໍລິການ.

3. ພື້ນຖານຄິດໄລ່ອາກອນລາຍໄດ້ຂອງຈຸນລະວິສາຫະກິດ ແມ່ນລາຍຮັບທຸລະກິດໃນປີ;

4. ຕ້ອງຖືບັນຊີ ຕາມລະບົບການບັນຊີຈຸນລະວິສາຫະກິດ ທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການບັນຊີ;

5. ຕ້ອງນໍາໃຊ້ໃບເກັບເງິນ ຕາມແບບໃບເກັບເງິນຈຸນລະວິສາຫະກິດ ທີ່ໄດ້ກໍານົດໄວ້ໃນດໍາລັດວ່າດ້ວຍໃບເກັບເງິນ ຫຼື ໃບເກັບເງິນ ທີ່ອອກດ້ວຍເຄື່ອງບັນທຶກການຂາຍສິນຄ້າ ແລະ ການບໍລິການ pos, ipos, program ipos ທີ່ໄດ້ຮັບອະນຸຍາດ ແລະ ຮັບຮອງ ຈາກຂະແໜງສ່ວຍສາອາກອນ;

6. ຕ້ອງອອກໃບເກັບເງິນໃຫ້ແກ່ລູກຄ້າທຸກຄັ້ງທີ່ມີການສະໜອງສິນຄ້າ ແລະ ການບໍລິການ;

7. ມີໜ້າທີ່ຄິດໄລ່ ແລະ ຫັກອາກອນລາຍໄດ້ຈາກເງິນເດືອນ-ເງິນແຮງງານ ກ່ອນການເບີກຈ່າຍເງິນເດືອນໃຫ້ພະນັກງານກໍາມະກອນ ແລະ ຕ້ອງແຈ້ງມອບເຂົ້າງົບປະມານແຫ່ງລັດ ບໍ່ໃຫ້ກາຍວັນທີ 20 ຂອງເດືອນຖັດໄປ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 32 ຂໍ້ 2 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ;

7.1 ໃຫ້ຄິດໄລ່ ແລະ ຫັກອາກອນມູນຄ່າເພີ່ມ ແລະ ອາກອນກາໄລ່ແບບບັງຄັບຈາກຜູ້ບໍ່ມີພູມລໍາເນົາ ຕາມທີ່ໄດ້ການົດໄວ້ໃນມາດຕາ 32 ຂອງກົດໝາຍວ່າດ້ວຍອາກອນມູນຄ່າເພີ່ມ ແລະ ມາດຕາ 14 ຂໍ້ 2 ຂອງກົດໝາຍວ່າດ້ວຍອາກອນລາຍໄດ້;

8. ແຈ້ງມອບອາກອນລາຍໄດ້ຈຸນລະວິສາຫະກິດ ແລະ ອາກອນລາຍໄດ້ຈາກເງິນເດືອນ ຜ່ານລະບົບ TaxRIS ດ້ວຍຕົນເອງແບບອອນລາຍຜ່ານທາງ: http://taxservice.mof.gov.la/websquare/websquare.do ແລະ ຊໍາລະຜ່ານລະບົບ Easy Tax ຕາມຊ່ອງທາງຕ່າງໆຂອງທະນາຄານ ເຊັ່ນ: BCEL one, LDB Trust, APB Quick, LVB DigiBank,

VietinBank Lao ຕາມກຳນົດເວລາ ທີ່ໄດ້ລະບຸໄວ້ໃນກົດໝາຍ ແລະ ສັນຍາ ລະຫວ່າງ ເຈົ້າຂອງວິສາຫະກິດ ແລະ ຂະແໜງສ່ວຍສາອາກອນ ເປັນເດືອນ, ງວດ ຫຼື ປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂໍ້ 4 ແລະ ຂໍ້ 5 ຂອງກົດໝາຍວ່າດ້ວຍການຄຸ້ມຄອງສ່ວຍສາອາກອນ ສະບັບເລກທີ 66/ສພຊ;

9. ການລະເມີດ ຫຼື ບໍ່ປະຕິບັດ ຄຳແນະນຳ ຂໍ້ 4, 5, 6, 7 ແລະ 8 ຈະຖືກປະຕິບັດມາດຕະການປັບໃໝ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍອາກອນລາຍໄດ້ ແລະ ດຳລັດວ່າດ້ວຍໃບເກັບເງິນ;

10. ເຈົ້າຂອງວິສາຫະກິດ ຕ້ອງຈິງໃຈແຈ້ງລາຍຮັບທຸລະກິດຂອງຕົນຕາມຕົວຈິງ ຕໍ່ ຂະແໜງສ່ວຍສາອາກອນ ບ່ອນທີ່ຕົນຂຶ້ນກັບ ແລະ ຕ້ອງໃຫ້ຄວາມຮ່ວມມືກັບຄະນະປະເມີນລາຍຮັບ ທີ່ລົງເຮັດວຽກໃນແຕ່ລະຄັ້ງ;

11. ກໍລະນີ ຫົວໜ່ວຍຈຸນລະວິສາຫະກິດ ສະໝັກໃຈເຂົ້າໃນລະບົບອາກອນມູນຄ່າເພີ່ມ ຈະໄດ້ຮັບນະໂຍບາຍເສຍອາກອນກຳໄລ ໃນອັດຕາຫຼຸດຜ່ອນ ສູນຈຸດໜຶ່ງສ່ວນຮ້ອຍ (0,1%) ເປັນໄລຍະເວລາ 3 ປີ ບົນພື້ນຖານການນຳໃຊ້ລະບົບບັນຊີທີ່ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການບັນຊີ ;

12. ຄຳແນະນຳສະບັບນີ້ ເປັນການແນະນຳເບື້ອງຕົ້ນໃຫ້ແກ່ຈຸນວິສາຫະກິດ ທີ່ສ້າງຕັ້ງຂຶ້ນໃໝ່, ຖ້າຫາກທ່ານບໍ່ເຂົ້າໃຈຂໍ້ໃດ? ຫຼື ຈຸດໃດ? ທ່ານສາມາດເຂົ້າໄປຂໍຄຳແນະນຳເພີ່ມເຕີມໄດ້ທີ່ຫ້ອງການສ່ວຍສາອາກອນ ບ່ອນທີ່ຢູ່ໃກ້ທ່ານທີ່ສຸດ.

ດັ່ງນັ້ນ, ຈຶ່ງອອກຄຳແນະນຳສະບັບນີ້ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດ.

**<u>ຫົວໜ່ວຍທຸລະກິດ</u>**

ຂ້າພະເຈົ້າ ໄດ້ຮັບຮູ້ ແລະ ເຂົ້າໃຈ ຕາມຄຳແນະນຳ
ສະບັບນີ້ທຸກປະການ ແລະ ຈະປະຕິບັດຢ່າງເຂັ້ມງວດ.

ຊື່ວິສາຫະກິດ:.............................................

ເລກປະຈຳຕົວຜູ້ເສຍອາກອນ:.............................

ລົງລາຍເຊັນ:.............................................

ຊື່ ແລະ ນາມສະກຸນ:......................................

ຮກ. **ຫົວໜ້າກົມສ່ວຍສາອາກອນ**

ທ່ານມະລິດ ຣາຊະພົນ

**ທ່ານສາມາດດາວໂຫລດກົດໝາຍ, ນິຕິກຳຕ່າງໆ ແລະ ວິທີການແຈ້ງ-ມອບອາກອນ**
**ຕາມເວັບໄຊ: taxservice.mof.gov.la ຫລື ຕາມ QR Code ຂ້າງເທິງນີ້**